ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ອົງຄະນະພັກທະນາຄານແຫ່ງ ສປປ ລາວ ດຳເນີນກອງປະຊຸມເປີດກ້ວາງຄະນະບໍລິຫານງານພັກ.



ອົງຄະນະພັກທະນາຄານແຫ່ງ ສປປ ລາວ ໄດ້ຈັດຕັ້ງ ແລະ ດຳເນີນກອງປະຊຸມເປີດກ້ວາງຄະນະບໍລິຫານງານພັກທະນາຄານແຫ່ງ ສປປ ລາວ ລະຫວ່າງ ວັນທີ 28 ຫາ 30 ມີນາ 2018 ທີ່ສະໂມສອນ ສະຖາບັນການທະນາຄານ, ນະຄອນຫຼວງ ວຽງຈັນ ພາຍໃຕ້ການເປັນປະທານຂອງ ສະຫາຍ ສົມພາວ ໄຟສິດ, ກຳມະການສູນກາງພັກ, ເລຂາຄະນະພັກທະນາຄານແຫ່ງ ສປປ ລາວ, ຜູ້ວ່າການທະນາຄານແຫ່ງ ສປປ ລາວ; ພ້ອມນີ້ ກໍມີບັນດາສະຫາຍຄະນະປະຈຳພັກ, ບັນດາສະຫາຍຄະນະພັກ, ບັນດາສະຫາຍຄະນະພັກຮາກຖານ-ຄະນະໜ່ວຍພັກ ແລະ ພະນັກງານຫຼັກແຫຼ່ງ ທົ່ວອົງຄະນະພັກທະນາຄານແຫ່ງ ສປປ ລາວ ເຂົ້າຮ່ວມຢ່າງພ້ອມພຽງ.

ໃນກອງປະຊຸມເປີດກ້ວາງຄະນະບໍລິຫານງານພັກທະນາຄານແຫ່ງ ສປປ ລາວ ຄັ້ງນີ້, ຍັງໄດ້ສະເໜີຮ່າງບົດສະຫຼຸບຂອງຄະນະບໍລິຫານງານພັກທະນາຄານແຫ່ງ ສປປ ລາວ ທີ່ໄດ້ສ່ອງແສງໃຫ້ເຫັນໝາກຜົນແຫ່ງການເຄື່ອນໄຫວຊີ້ນຳ ແລະ ນຳພາຮອບດ້ານຂອງຄະນະບໍລິຫານງານພັກທະນາຄານແຫ່ງ ສປປ ລາວ ໃນໜຶ່ງປີ 2017 ຜ່ານມາ, ພ້ອມທັງ ຜ່ານທິດທາງແຜນການຈັດຕັ້ງປະຕິບັດໃນຕໍ່ໜ້າ; ສະເໜີບົດລາຍງານການຈັດຕັ້ງປະຕິບັດວຽກງານສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ (SME) ໃນໄລຍະຜ່ານມາ ແລະ ວາງທິດທາງແຜນການໃນຕໍ່ໜ້າ; ສະເໜີແນວທາງການປັບປຸງຖານະການເງິນຂອງທະນາຄານທຸລະກິດລັດ ຈຳນວນໜຶ່ງ ແລະ ຈາກນັ້ນ ບັນດາຜູ້ແທນຂອງກອງປະຊຸມ ກໍໄດ້ປະກອບຄຳຄິດຄຳເຫັນໃສ່ຮ່າງບົດສະຫຼຸບ ແລະ ທິດທາງແຜນການ ດ້ວຍບັນຍາກາດສ້າງສັນ ບົນພື້ນຖານປະຊາທິປະໄຕ ປະຊາຊົນ ເພື່ອຮັບປະກັນໃຫ້ເນື້ອໃນອຸດົມສົມບູນກວ່າເກົ່າ;






ສຳລັບໃນມື້ຕໍ່ມາ, ກອງປະຊຸມ ຍັງຈະນຳສະເໜີບົດລາຍງານວຽກງານຄຸ້ມຄອງສະຖາບັນການເງິນ; ນຳສະເໜີບົດຄົ້ນຄ້ວາການປັບປຸງນະໂຍບາຍອັດຕາແລກປ່ຽນ ແລະ ການຄຸ້ມຄອງເງິນຕາຕ່າງປະເທດ; ຜ່ານບົດສະຫຼູບ ຕີລາຄາການຜັນຂະຫຍາຍຜົນສຳເລັດຂອງບັ້ນດຳເນີນຊີວິດການເມືອງປັບປຸງປົວແປງພັກຢູ່ອົງຄະນະພັກທະນາຄານແຫ່ງ ສປປ ລາວ; ເຜີຍແຜ່ ແລະ ເຊື່ອມຊຶມມະຕິວ່າດ້ວຍມາດຕະຖານຂອງພະນັກງານນຳພາ ແລະ ຄຸ້ມຄອງ; ເຜີຍແຜ່ ແລະ ເຊື່ອມຊຶມມະຕິ ວ່າດ້ວຍວຽກງານຄຸ້ມຄອງພະນັກງານນຳພາ; ເຜີຍແຜ່ ແລະ ເຊື່ອມຊຶມມະຕິ ວ່າດ້ວຍວຽກງານສ້າງແຜນກຳນົດພະນັກງານນຳພາ ແລະ ຄຸ້ມຄອງ; ເຊື່ອມຊຶມຄຳສັ່ງວ່າດ້ວຍການການປັບປຸງຄຸນນະພາບການເຄື່ອນໄຫວຂອງກົງຈັກການຈັດຕັ້ງ ແລະ ການບັນຈຸລັດຖະກອນໃໝ່; ເຜີຍແຜ່ ແລະ ເຊື່ອມຊຶມມະຕິ ວ່າດ້ວຍການເພີ່ມທະວີການກໍ່ສ້າງໜ່ວຍພັກ ປອດໃສ, ເຂັ້ມແຂງ, ໜັກແໜ້ນ; ລາຍງານຫຍໍ້ການເຄື່ອນໄຫວຊີ້ນຳ ແລະ ນຳພາຮອບດ້ານຂອງຄະນະບໍລິຫານງານພັກທະນາຄານແຫ່ງ ສປປ ລາວ ປະຈຳປີ 2017 ແລະ ກອງປະຊຸມ ຍັງຈະໄດ້ຮັບຟັງການໂອ້ລົມ ແລະ ໃຫ້ທິດຊີ້ນຳຈາກຄະນະພັກຂັ້ນເທິງ.

**# ຂ່າວ-ພາບ: ຣັດສະໝີ ດວງສັດຈະ**

## ເສດຖະກິດລາວຈະເຂັ້ມແຂງ ຖ້າປວງຊົນຮ່ວມແຮງນຳໃຊ້ເງິນກີບ